ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ
ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ                    ເລກທີ...໐໐1.../ຄລທ.ຂ.ຈສ

ແຂວງຈຳປາສັກ, ວັນທີ..໒໐.... ມີນາ 2018

# ຂໍ້ຕົກລົງ

# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ

- ອີງຕາມ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ສະບັບເລກທີ 05/ນຍ, ລົງວັນທີ 05/01/2018.
- ອີງຕາມຄຳສັ່ງວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສ ປປ ລາວ ສະບັບເລກທີ 02/ນຍ ລົງວັນທີ 01/02/2018.

## ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນ, ຫຼຸດຜ່ອນບັນດາຂອດຂັ້ນການພິຈາລະນາອະນຸມັດຂອງຂະແໜງການພາກລັດ ເຮັດໃຫ້ກົນໄກການພິຈາ ລະນາອະນຸມັດການລົງທຶນໄວຂຶ້ນ ແລະ ການຊຸກຍູ້ສົ່ງເສີມການລົງທຶນ ໃຫ້ເປັນລະບົບປະຕູດຽວ, ໂປ່ງໃສ, ວ່ອງໄວ, ມີປະສິດທິພາບ, ສາມາດແຂ່ງຂັນ ແລະ ດຶງດູດການລົງທຶນທີ່ມີຄຸນນະພາບໄດ້.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ ມີຊື່ຫຍໍ້ວ່າ: "ຫລປ.ຂ" ຕັ້ງຢູ່ ພະແນກແຜນການ ແລະ ການລົງທຶນ ໂດຍຖືເອົາ ຂະແໜງສົ່ງເສີມການລົງທຶນ ເຮັດໜ້າທີ່ເປັນ ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ, ມີພາລະບົດບາດເປັນກອງເລຂາຊ່ວຍວຽກ ໃຫ້ແກ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ

- ຮັບ ແລະ ນຳສົ່ງເອກະສານຕ່າງໆ ກ່ຽວກັບວຽກງານສົ່ງເສີມ ແລະຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດຢູ່ແຂວງຈຳປາສັກ ສົ່ງໃຫ້ທ່ານປະທານ ຫລືຮອງປະທານ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນພິຈາລະນາ ໂດຍບໍ່ຜ່ານຂັ້ນຕອນປົກກະຕິໃນການກວດກາ, ຄົ້ນຄວ້າເອກະສານ;
- ຄຸ້ມຄອງການນຳໃຊ້ຕາປະທັບຂອງ ຄະນະກຳມະການ ສົ່ງເສີມ ແລະຄຸ້ມຄອງການລົງທຶນຂັ້ນແຂວງ ຕາມພາລະບົດບາດ ແລະ ຂອບເຂດສິດ;

11. ປະສານງານເອົາໃບທະບຽນວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການຄ້າ, ໃບທະບຽນອາກອນ ຫຼື ເລກລະຫັດປະຈຳຕົວຜູ້ເສຍອາກອນ ນຳຂະແໜງການການເງິນ ແລະ ໃບອະນຸຍາດດຳເນີນກິດຈະການນຳຂະແໜງການກ່ຽວຂ້ອງ ໃຫ້ວ່ອງໄວ, ເຮັດໃຫ້ປະສິດທິພາບຂອງວຽກງານການບໍລິການການລົງທຶນປະຕູດຽວຂອງແຂວງ ໃຫ້ນັບມືນັບດີຂຶ້ນ ຕາມຄຳສັ່ງ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານ ໃນການດຳເນີນທຸລະກິດ ຢູ່ ສ ປປ ລາວ ສະບັບເລກທີ 02/ນຍ ລົງວັນທີ 01/02/2018;
12. ປະສານງານກັບພາກສ່ວນຕ່າງໆ ແລະ ໜ່ວຍງານປະສານງານປະຕູດຽວຂອງຂະແໜງການກ່ຽວຂ້ອງ ເພື່ອຮັບປະກັນຄວາມວ່ອງໄວ ແລະ ໂປ່ງໃສ ໃນການໃຫ້ບໍລິການ ການລົງທຶນປະຕູດຽວ;
13. ມອບຈົດໝາຍຕອບຜູ້ລົງທຶນ, ໃບອະນຸຍາດລົງທຶນ, ໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ, ໃບສົ່ງເສີມການລົງທຶນ ແລະ ເອກະສານອື່ນທີ່ກ່ຽວຂ້ອງໃຫ້ແກ່ຜູ້ລົງທຶນ;
14. ປະສານງານຕາມສາຍຕັ້ງ ລະຫວ່າງ ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ, ສ້າງຄວາມວ່ອງໄວ ແລະ ມີປະສິດທິພາບໃນວຽກງານບໍລິການ ການລົງທຶນປະຕູດຽວ ໃຫ້ນັບມື້ນັບດີຂຶ້ນ;
15. ເປັນໃຈກາງປະສານງານກັບຂະແໜງການກ່ຽວຂ້ອງ ໃນການຄົ້ນຄວ້າ, ປັບປຸງ ແລະ ແກ້ໄຂ ຂອດຂັ້ນການອອກອະນຸຍາດ ໃຫ້ມີຄວາມກະທັດຫັດ, ວ່ອງໄວ, ໂປ່ງໃສ, ອຳນວຍຄວາມສະດວກ ໃນການດຳເນີນທຸລະກິດຂອງພາກເອກະຊົນຢູ່ ແຂວງຈຳປາສັກ ໃຫ້ມີປະສິດທິພາບ ແນ່ໃສ່ຫຼຸດຜ່ອນລະດັບຄວາມຫຍຸ້ງຍາກ ກໍຄື ຍົກລະດັບຕົວຊີ້ວັດຄວາມງ່າຍດ່າຍໃນການດຳເນີນທຸລະກິດ ຢູ່ແຂວງຈຳປາສັກ;
16. ໃຫ້ການແນະນຳ ຫຼື ຊ່ວຍເຫຼືອເບື້ອງຕົ້ນ ໃນການແກ້ໄຂບັນຫາ ຫຼື ຄຳຮ້ອງທຸກ ທີ່ພົວພັນກັບການລົງທຶນ ເພື່ອສະກັດກັ້ນ ບໍ່ໃຫ້ເກີດມີຂໍ້ຂັດແຍ່ງທີ່ຈະນຳໄປສູ່ການຮ້ອງຟ້ອງ ຫຼື ເຂົ້າສູ່ຂະບວນການຍຸຕິທຳ ໂດຍມີການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ;
17. ສະຫຼຸບ, ຕີລາຄາ, ຖອດຖອນບົດຮຽນ ແລະ ສະເໜີທິດທາງໃນການປັບປຸງວຽກງານການໃຫ້ບໍລິການການລົງທຶນປະຕູດຽວ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອພິຈາລະນາ ແລະ ໃຫ້ຄຳຊີ້ນຳໃນແຕ່ລະໄລຍະ;
18. ຕິດຕາມ, ກວດກາການລົງທຶນ ແລ້ວລາຍງານຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ ໃນແຕ່ລະໄລຍະ;
19. ເປັນໃຈກາງໃນການສະຫຼຸບສັງລວມວຽກງານການບໍລິການ ການລົງທຶນປະຕູດຽວ ໃນຂອບເຂດທົ່ວແຂວງຈຳປາສັກ ເພື່ອລາຍງານຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ;
20. ເຂົ້າຮ່ວມ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

**ມາດຕາ 4 ຂອບເຂດສິດ**

ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ ມີສິດ ດັ່ງນີ້:

1. ອອກບົດແນະນຳດ້ານວິຊາການ ໃຫ້ໜ່ວຍງານປະສານງານປະຕູດຽວ ຂອງຂະແໜງການກ່ຽວຂ້ອງ, ເມືອງ, ຫົວໜ່ວຍທຸລະກິດ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;
2. ອອກຈົດໝາຍແຈ້ງທວງເອົາຄຳເຫັນຈາກຂະແໜງການກ່ຽວຂ້ອງກ່ຽວກັບວຽກງານລົງທຶນ;

2. ຂະແໜງສົ່ງເສີມການລົງທຶນປະກອບດ້ວຍ:

- ຈຸງານບໍລິການການລົງທຶນປະຕູດຽວ ປະກອບດ້ວຍ ການບໍລິການໃຫ້ແກ່ພາກທຸລະກິດ ແລະ ປະສານກັບພາກລັດ;

- ຈຸງານ ຄົ້ນຄວ້າ ແລະ ເລຂານຸການ ປະກອບດ້ວຍ ຄົ້ນຄວ້າໂຄງການລົງທຶນ ແລະ ເລຂານຸການຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ.

**ມາດຕາ 7 ໂຄງປະກອບບຸກຄະລາກອນ ຂອງຫ້ອງການບໍລິການການລົງທຶນປະຕູດຽວ**

ໂຄງປະກອບບຸກຄະລາກອນ ຂອງຄະນະຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນແຂວງ ປະກອບມີ:

ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ເປັນຫົວໜ້າ ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນແຂວງ ໂດຍຕຳແໜ່ງ, ຊຶ່ງໃນນີ້:

1. ຄະນະວິຊາການປະຕູດຽວ ຊຶ່ງປະກອບດ້ວຍ ຫົວໜ້າ ຫຼື ຮອງ ຂະແໜງຈາກພະແນກ ອຸດສາຫະກຳ ແລະ ການຄ້າ, ການເງິນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະລັງງານ ແລະ ບໍ່ແຮ່, ກະສິກຳ ແລະ ປ່າໄມ້, ແຮງງານ ແລະ ສະຫວັດດີການສັງຄົມ, ໂຍທາທິການ ແລະ ຂົນສົ່ງ, ຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ;
2. ຂະແໜງສົ່ງເສີມການລົງທຶນປະກອບດ້ວຍ:

- ຈຸງານບໍລິການການລົງທຶນປະຕູດຽວ ປະກອບດ້ວຍ ບໍລິການໃຫ້ແກ່ພາກທຸລະກິດ ແລະ ປະສານກັບພາກລັດ;

- ຈຸງານ ຄົ້ນຄວ້າ ແລະ ເລຂານຸການ ປະກອບດ້ວຍ ຄົ້ນຄວ້າໂຄງການລົງທຶນ ແລະ ເລຂານຸການຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ.

**ມາດຕາ 8 ລະບອບການປະຊຸມ**

ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ ຈັດກອງປະຊຸມວິຊາການປະຈຳອາທິດ ຢ່າງໜ້ອຍອາທິດລະ 01 ຄັ້ງ ເພື່ອຄົ້ນຄວ້າການສະເໜີຂອງຜູ້ລົງທຶນ ກ່ອນນຳສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

**ມາດຕາ 9 ລະບຽບວາລະການປະຊຸມ**

ບັນຫາທີ່ສະເໜີເຂົ້າໃນ ວາລະກອງປະຊຸມ ຫ້ອງການບໍລິການ ການລົງທຶນປະຕູດຽວ ມີດັ່ງນີ້:

1. ຄຳຮ້ອງຂໍລົງທຶນ, ຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ ແລະ ຂໍອອກໄປລົງທຶນຢູ່ຕ່າງປະເທດ;
2. ການສະເໜີຂໍດັດແກ້ສັນຍາ, ດັດແກ້ກິດຈະການລົງທຶນ ແລະ ປ່ຽນແປງທາງດ້ານນິຕິກຳຕ່າງໆ ໃນວິສາຫະກິດ ແລະ ໂຄງການທີ່ໄດ້ອະນຸຍາດລົງທຶນ;
3. ການລາຍງານສະພາບຄວາມຄືບໜ້າໃນການຈັດຕັ້ງປະຕິບັດສັນຍາ ກໍ່ຄືໂຄງການຂອງຜູ້ລົງທຶນ;
4. ການລາຍງານສະພາບຂໍ້ຂັດແຍ່ງຕ່າງໆ ຫຼື ການແກ້ໄຂຂໍ້ຂ້ອງໃຈຂອງຜູ້ລົງທຶນ ແລະ ພາກສ່ວນຕ່າງໆ ຈາກພາກລັດ ແລະ ເອກະຊົນ ທີ່ມີຕໍ່ໂຄງການລົງທຶນ;
5. ຂໍ້ສະເໜີ ຂອງແຕ່ລະຂະແໜງກ່ຽວຂ້ອງ ຂັ້ນແຂວງ ແລະ ເມືອງ ທີ່ພົວພັນວຽກງານ ສົ່ງເສີມການລົງທຶນ;
6. ເນື້ອໃນການລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຄັ້ງທີ່ຜ່ານມາ;

ອາກອນ; ສະຫລຸບສັງລວມວຽກງານການລົງທຶນຂອງພະແນກຕົນຮັບຜິດຊອບ ປະຈຳໄຕມາດ ແລະ ປະຈຳປີ.

- **ຂະແໜງກະສິກຳ ແລະ ປ່າໄມ້:** ມີໜ້າທີ່ປະສານງານກັບຂະແໜງການຂອງຕົນ ເພື່ອອອກໃບອະນຸຍາດດຳເນີນກິດຈະການ ແລະ/ຫຼື ໃບອະນຸຍາດຕ່າງໆທີ່ກ່ຽວຂ້ອງ ຕາມພາລະບົດບາດ ພາຍຫຼັງມີບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ, ໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນ; ສະຫລຸບສັງລວມວຽກງານການລົງທຶນຂອງພະແນກຕົນຮັບຜິດຊອບ ປະຈຳໄຕມາດ ແລະ ປະຈຳປີ.
- **ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ:** ມີໜ້າທີ່ປະສານງານກັບຂະແໜງການຂອງຕົນກ່ຽວກັບໂກຕາການນຳເຂົ້າແຮງງານ ແລະ ການອອກບັດແຮງງານໃຫ້ຜູ້ລົງທຶນຕ່າງປະເທດ; ສະຫລຸບສັງລວມວຽກງານການລົງທຶນຂອງພະແນກຕົນຮັບຜິດຊອບ ປະຈຳໄຕມາດ ແລະ ປະຈຳປີ.
- **ຂະແໜງໂຍທາທິການ ແລະ ຂົນສົ່ງ:** ມີໜ້າທີ່ປະສານງານກັບຂະແໜງການຂອງຕົນ ເພື່ອອອກໃບອະນຸຍາດດຳເນີນກິດຈະການ ແລະ/ຫຼື ໃບອະນຸຍາດຕ່າງໆທີ່ກ່ຽວຂ້ອງ ຕາມພາລະບົດບາດ ພາຍຫຼັງມີບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ, ໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນ; ສະຫລຸບສັງລວມວຽກງານການລົງທຶນຂອງພະແນກຕົນຮັບຜິດຊອບ ປະຈຳໄຕມາດ ແລະ ປະຈຳປີ.
- **ຂະແໜງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ:** ມີໜ້າທີ່ປະສານງານກັບຂະແໜງ ການຂອງຕົນ ເພື່ອອອກໃບອະນຸຍາດດຳເນີນກິດຈະການ ແລະ/ຫຼື ໃບອະນຸຍາດຕ່າງໆທີ່ກ່ຽວຂ້ອງ ຕາມພາລະບົດບາດພາຍຫຼັງມີບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ, ໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນ; ສະຫລຸບສັງລວມວຽກງານການລົງທຶນຂອງພະແນກຕົນຮັບຜິດຊອບ ປະຈຳໄຕມາດ ແລະ ປະຈຳປີ.
- **ຂະແໜງປ້ອງກັນຄວາມສະຫງົບ:** ມີໜ້າທີ່ປະສານງານກັບຂະແໜງການຂອງຕົນ ເພື່ອກວດກາປະຫວັດຜູ້ລົງທຶນ, ການອອກບັດພັກເຊົາໃຫ້ຜູ້ລົງທຶນຕ່າງປະເທດ, ຄວັດກາປະທັບ ແລະ ອອກອະນຸຍາດນຳໃຊ້ກາປະທັບ, ສະຫລຸບສັງລວມວຽກງານການລົງທຶນຂອງພະແນກຕົນຮັບຜິດຊອບ ປະຈຳໄຕມາດ ແລະ ປະຈຳປີ.

**ມາດຕາ 12 ໜ້າທີ່ລວມ ຂອງໜ່ວຍງານປະສານງານ ການບໍລິການ ການລົງທຶນປະຕູດຽວຂອງຂະ ແໜງການກ່ຽວຂ້ອງ.**

ໜ່ວຍງານປະສານງານ ການບໍລິການ ການລົງທຶນປະຕູດຽວຂອງຂະແໜງການກ່ຽວຂ້ອງມີໜ້າທີ່ລວມ ດັ່ງນີ້:

- ບໍລິການໃຫ້ຂໍ້ມູນ ແລະ ອະທິບາຍຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບຂະແໜງການຂອງຕົນ;
- ມີສິດເຂົ້າຮ່ວມກອງປະຊຸມຫ້ອງການບໍລິການ ການລົງທຶນປະຕູດຽວ, ກອງປະຊຸມຄະນະສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແລະ ປະກອບຄຳເຫັນຕາງໜ້າຂະແໜງການຕົນ;
- ປະສານງານກັບຂະແໜງການຂອງຕົນ ເພື່ອປະກອບຄຳເຫັນຕໍ່ການສະເໜີຂອງຜູ້ລົງທຶນ, ສະໜອງຂໍ້ມູນກ່ຽວກັບນະໂຍບາຍ, ນິຕິກຳ, ຂໍ້ມູນດ້ານສະຖິຕິ ແລະ ບັນຫາອື່ນທີ່ກ່ຽວຂ້ອງກັບຂະແໜງການຕົນໃຫ້ແກ່ຫ້ອງການບໍລິການ ການລົງທຶນປະຕູດຽວ;
- ປະຕິບັດພາລະບົດບາດອື່ນທີ່ຕິດພັນກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມການມອບໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 17 ງົບປະມານ ແລະ ຕາປະທັບ**

ຫ້ອງການບໍລິການ ການລົງທຶນປະຕູດຽວ ນໍາໃຊ້ຕາປະທັບອັນດຽວກັນກັບຕາປະທັບ ຂອງພະແນກແຜນການ ແລະ ການລົງທຶນແຂວງ ແລະ ນໍາໃຊ້ງົບປະມານບໍລິຫານປົກກະຕິ ຂອງພະແນກແຜນການ ແລະ ການລົງທຶນແຂວງ ຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 18 ການຈັດຕັ້ງປະຕິບັດ**

ຫ້ອງການບໍລິການ ການລົງທຶນປະຕູດຽວ, ບັນດາຂະແໜງການຂອງແຂວງ, ເມືອງ ແລະ ໜ່ວຍງານປະສານງານປະຕູດຽວ ຂອງແຕ່ລະຂະແໜງການກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 19 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ບັນດາຂໍ້ຕົກລົງ ແລະ ລະບຽບຕ່າງໆ ກ່ອນໜ້ານີ້ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ເຈົ້າແຂວງ**
**ປະທານຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ**

ແຂວງຈໍາປາສັກ
ເຈົ້າແຂວງ

**ປອ. ບຸນທອງ ດີວິໄຊ**